# ໂຮງຮຽນວັນອາທິດ

**ວັນອາທິດ ທີ 11 ກໍຣະກະດາ 2010 (7/11/2010)**

## ພລັງຂອງຄວາມກ້າຫານ.

**ຂໍ້ພຣະຄັມພີໃນບົດຮຽນ:** 1 ຊາມູເອນ 17:8-11,32-39,45-47

## ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?

ບົດຮຽນນີ້ສາມາດຊ່ວຍໃຫ້ທ່ານຄົ້ນພົບວ່າຄວາມກ້າຫານທີ່ພຣະເຈົ້າປະທານໃຫ້ເມື່ອທ່ານປະເຊີນໜ້າກັບບັນຫາໃນເວລານີ້ຫຼືໃນອະນາຄົດຂ້າງໜ້າ.

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ:

ບົດຮຽນນີ້ແມ່ນກ່ຽວກັບເຣື່ອງຄວາມກ້າຫານຂອງດາວິດທີ່ຕໍ່ສູ້ກັບໂກລິອາດເມື່ອໂກລິອາດໄດ້ລ້ອມຮອບລາວໄວ້ລາວບໍ່ໄດ້ມີຄວາມຢ້ານກົວແຕ່ຢ່າງໃດເລີຍ.

## ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:

ຄົນທີ່ເປັນຜູ້ໃຫຍ່ແລ້ວຕ້ອງເຂົ້າໃຈວ່າພວກເຂົາສາມາດໄວ້ວາງໃຈໃນພຣະເຈົ້າສເມີໃນຂະນະທີ່ພວກເຂົາເບິ່ງເໝືອນກັບວ່າບໍ່ມີກຳລັງພໍທີ່ຈະປະເຊີນກັບບັນຫາໃຫ່ຍໆ. ຄົນທີ່ເປັນຜູ້ໃຫຍ່ແລ້ວໃນທຸກມື້ນີ້ແມ່ນມີຄວາມຮູ້ສຶກຢ້ານກົວແລະຂາດຄວາມກ້າຫານໃນການທີ່ຈະປະເຊີນໜ້າກັບຄວາມບໍ່ຖືກຕ້ອງໃນຊີວິດປະຈຳວັນ. ພວກເຂົາຕ້ອງຈື່ໄວ້ວ່າພຣະເຈົ້າໃຫ້ຄວາມກ້າຫານກັບເຂົາພໍທີ່ຈະປະເຊີນກັບທຸກໆບັນຫາ.

ໃນຖານະເປັນຜູ້ປ້ອງກັນດ້ານຫຼັງ, ຂ້າພຣະເຈົ້າໄດ້ເຂົ້າຮ່ວມນຳຄະນະນັກສຶກສາປີທີສອງໂດຍມີຄວາມຮູ້ສຶກເກັງກົວຢ່າງໃຫຍ່ຫຼວງ. ກອງຫຼັງຂອງພວກເຮົານ້ຳໜັກໂດຍສະເລັ່ຍແລ້ວແມ່ນ 220 ພາວແລະແລ່ນໃນຄວາມໄວ 4.4 ວິນາທີໃນລະຍະ 40 ຍາດ. ນ້ຳໜັກຂ້າພຣະເຈົ້າພຽງແຕ່ 130 ພາວແລະແລ່ນໃນຄວາມໄວ 4.8 ວິນາທີ. ທຸກໆຄັ້ງໃນການລົງຝຶກຊ້ອມຕົວຂ້າພຣະເຈົ້າເອງຮູ້ສຶກວ່າເປັນໝືອນກັບດາວິດທີ່ຕໍ່ສູ້ກັບໂກລິອາດ. ຂ້າພຣະເຈົ້າຈື່ບໍ່ລືມໃນມື້ທຳອິດເມື່ອລົງຝຶກຊ້ອມເມື່ອກອງຫຼັງຂອງຝ່າຍຕົງຂ້າມທີ່ມີໂຕຂນາດໃຫຍ່ເມື່ອແລ່ນເຂົ້າກະແທກຕົວຂ້າພຣະເຈົ້າດ້ວຍຄວາມແຮງໝວກກັນກະທົບແລະເຄື່ອງປ້ອງກັນບ່າໄລ່ແລະຕົວຂອງຂ້າພຣະເຈົ້າເອງຮູ້ສຶກວ່າຈະຟົ້ງກະເດັນໄປ. ຕໍ່ມາ, ໂຕຂອງຝ່າຍກົງກັນຂ້າມປາກົດວ່າໄດ່ກວມຕົວຂອງຂ້າພຣະເຈົ້າຢູ່; ຂ້າພຣະເຈົ້າພະຍາຍາມຕໍ່ສູ້ແລະຂັດຂວາງ. ຂ້າພຣະເຈົ້າໄດ້ລືມໄປວ່າດາວິດຊະນະສູຕໍ່ສູ້ໄດ້ຢ່າງໃດ.

ສະຖານະການຂອງດາວິດໃນເວລານັ້ນ, ເຖິງຢ່າງກໍຕາມ, ຈະມີຊີວິດຫຼືຕາຍ ບໍ່ໄດ້ເພື່ອຕົວລາວເອງແຕ່ແມ່ນເພື່ອປະຊາຊົນຂອງລາວ. ດາວິດເຊື່ອໄວ້ວາງໃຈໃນອົງພຣະຜູ້ເປັນເຈົ້າທີ່ໃຫ້ກຳລັງຄວາມກ້າຫານແກ່ລາວຈົນລາວສາມາດຜາບແພ້ສັດຕຣູ. ຈົ່ງສັງເກດເບິ່ງຄວາມແຕກຕ່າງລະວາງກະສັດຊາອູນກັບດາວິດໃນການລົງມືຈັດການກັບການແກ້ໄຂບັນຫາໃຫ່ຍໆ.

# <u>ສຶກສາພຣະຄໍາພີ</u>

## 1. <u>ກ້າຫານທີ່ຈະຖ່ອມຕົວລົງ.</u> 1 ຊາມູເອນ 17:8-11

ເຖິງແມ່ນວ່າກະສັດຊາອູນຈະຍືນຂຶ້ນແລະລາວຈະສູງກ່າວຄົນອິສຣາເອນຄົນອື່ນ, ລາວຍັງມີຄວາມຢ້ານກົວໃນຖາມກາງໝູ່ປະຊາຊົນ(1 ຊາມູເອນ 10:22-24). ພຣະເຈົ້າໄດ້ເຮັດໃຫ້ລາວຍືນ**ຂຶ້ນ**ຢ່າງຄົນທີ່ກ້າຫານ, ແຕ່ລາວຊຸກຊ້ອນຄວາມຢ້ານກົວໄດ້ພາຍໃນ. ເຫດການນີ້ໄດ້ເກີດຂຶ້ນໃນຕົວລາວອີກຄັ້ງນຶ່ງໃນເວລາຈະເຂົ້າສູ່ສນາມຮົບ.

ໃນຂະນະທີ່ກອງທັບທະຫານຂອງຊາອູນຕັ້ງຄ້າຍພັກຢູ່ເທິງຮ່ອມພູອີລາ, ໂກລີອາດ, ນັກຮົບຜູ້ກ້າຫານຟີລິສຕິນ, ໄດ້ເຂົ້າມາໃນແຕ່ລະວັນເພື່ອຂົ່ມຂູ່ຫົວເລາະເຍາະເຍີ້ຍກອງທັບຂອງພຣະເຈົ້າວ່າບໍ່ມີຜູ້ໃດທີ່ຈະມີຄວາມສາມາດພຽງພໍທີ່ຈະຕໍ່ສູ້ໄດ້. ໂກລີອາດມີຄວາມສູງປະມານເກົ້າຟີດ. ມັນມີພວກເຫຼັກທີ່ເຮັດດ້ວຍທອງສຳຣິດແລະອາວຸດທີ່ມີນໍ້າໜັກປະມານ 125 ພາວ; ຫອກຂອງມັນໜັກປະມານສິບຫ້າພາວ.

ມື້ລະສອງຄັ້ງທັງເຊົ້າແລະແລງເປັນເວລານານຢູ່ສີ່ສິບວັນ, ໂກລີອາດ ໄດ້ອອກມາຢືນຮ້ອງແຜດສຽງຂົ່ມຂູ່ຫົວເຍາະເຍີ້ຍໃສ່ກອງທັບອິສຣາເອນເພື່ອທີ່ຈະໃຫ້ເຂົາອອກມາຕໍ່ສູ້( 1 ຊາມູເອນ 17:16). ມັນໄດ້ຫົວເຍາະເຍີ້ຍໄພ່ພົນຂອງພຣະເຈົ້າທີ່ເຂົາບໍ່ມີຄວາມກ້າຫານ. ອັນທີນຶ່ງ, ມັນໄດ້ໃຫ້ຄຳຖາມວ່າ ການເຂົ້າສູ້ຮົບຂອງພວກເຂົາຈະຊະນະມັນໄດ້ບໍ່ໂດຍຄຳຖາມທີ່ວ່າເປັນຫຍັງເຂົາບໍ່ລຽນໜ້າເຂົ້າມາຕໍ່ສູ້ລອງເບິ່ງ. ພວກເຂົາປະຕິເສດການຕໍ່ສູ້, ຄິດວ່າມັນຈະຜ່ານກາຍອອກໄປຈາກພວກເຂົາຊັ້ນບໍ. ແຕ່, ບໍ່ວ່າເປັນການຕໍ່ສູ້ກັບໂກລີອາດຫຼືການຕໍ່ສູ້ກັບສິ່ງຄາມອັນໃດກໍຕາມ ປົກກະຕິແລ້ວພວກເຮົາສາມາດປະເຊີນກັບມັນໄດ້ແລະຍັງສາມາດໃຫ້ມັນຜ່ານພົ້ນໄປໄດ້ຢ່າງງ່າຍດາຍ!

ໂກລີອາດໄດ້ບຸກໂຈມຕີຊາອູນໃນເມື່ອເພິ່ນຂາດຄວາມກ້າຫານ. ຊາອູນໄດ້ຢືນຂຶ້ນສູງກວ່າອິສຣາເອນຄົນອື່ນໆ (1 ຊາມູເອນ 10:23) ແຕ່ບໍ່ມີວິທີການທີ່ຈະຕໍ່ສູ້ກັບຍັກໃຫຍ່. ໂກລີອາດເຍາະເຍີ້ຍກຳລັງທະຫານຕໍ່ໜ້າປະຊາຊົນອິສຣາເອນ. ທັງຊາອູນແລະທະຫານຂອງພຣະອົງໄດ້ຍິນຄຳເວົ້າທ້າທາຍຂອງໂກລີອາດ, ແລະພວກເຂົາຂາດຄວາມກ້າຫານແລະເກີດຄວາມຢ້ານກົວ.

> ຄ້າຍຄືກັບອິສຣາເອນ, ພວກເຮົາທັງໝົດແມ່ນປະເຊີນໜ້າກັບການທ້າທາຍໃນການດຳລົງຊີວິດຂອງພວກເຮົາ. ມີຫຼາຍຢ່າງຫຼາຍແນວທີ່ທ້າທາຍເຮົາເບິ່ງຄືວ່າມັນໃຫຍ່ສຳລັບການທີ່ພວກເຮົາຈະເອົາຊະນະດ້ວຍກຳລັງຂອງຕົວເຮົາເອງ, ດັ່ງນັ້ນພວກເຮົາຈິ່ງມອບຄວາມຢ້ານກົວທີ່ເປັນສິ່ງກີດຂວາງເຮັດໃຫ້ເຮົາບໍ່ກ້າພໍທີ່ຈະປະເຊີນກັບມັນໃນແຕ່ລະວັນ. ເຖິງຢ່າງໃດກໍຕາມ, ເມື່ອຊາອູນມີຄວາມສັບສົນໃນການທີ່ຈະປະເຊີນໜ້າຕໍ່ສູ້ກັບໂກລີອາດ, ມັນເປັນການທຳລາຍຄວາມເຊື່ອໝັ້ນທັງໝົດຂອງກອງທະຫານ. ຖ້າວ່າກະສັດ, ຜູ້ຊຶ່ງມີຮູບຮ່າງໃຫຍ່ເທົ່າກັບໂກລີອາດເຂົາຈະບໍ່ຢ້ານໃນການທີ່ຈະປະເຊີນໜ້າກັບຄູ່ຕໍ່ສູ້, ເປັນຫຍັງຈຶ່ງເປັນແນວນັ້ນ? ດັ່ງນັ້ນໃນແຕ່ລະວັນບັນຫາໃຫຍ່ໆຈຶ່ງຫົວເຍາະເຍີ້ຍເຂົາ, ແລະໃນແຕ່ລະວັນເຂົາຖືກຄອບງຳຢູ່ດ້ວຍຄວາມຢ້ານ. ຈະເປັນໜ້າເສົ້າໃຈຊໍ່າໃດຕໍ່ຜູ້ທີ່ບໍ່ກ້າປະເຊີນກັບຄວາມຢ້ານແລະບັນຫາໃຫຍ່ໆ.

## <u>2.ກ້າຫານທີ່ຈະເປີດເຜີຍ.</u> 1 ຊາມູເອນ 17: 32-39

ດາວິດໄດ້ຍິນການທ້າທາຍຂອງໂກລີອາດແລະປລາດໃຈວ່າເປັນຫຍັງຄົນອິສຣາເອນຈຶ່ງຕົກໃຈຢ້ານກົວໃນເມື່ອເຂົາມີພຣະເຈົ້າຢູ່ຝ່າຍເຂົາ. ດາວິດໄດ້ຕັ້ງຄຳຖາມວ່າຈະມີຫຍັງເກີດຂຶ້ນຫາກມີຄົນນຶ່ງຂ້າໂກລີອາດ. ດາວິດໄດ້ທູນຕໍ່ກະສັດວ່າ**ບໍ່ຕ້ອງຢ້ານກົວເລີຍ**, ລາວຈະອອກໄປຕໍ່ສູ້ກັບໂກລີອາດດ້ວຍຕົວລາວເອງ. ດາວິດເປັນເດັກໜຸ່ມລ້ຽງແກະ, ແຕ່ມີຄວາມກ້າຫານຫຼາຍກວ່າກະສັດ. ຄວາມກ້າຫານບໍ່ໄດ້ຂຶ້ນຢູ່ກັບອາຍຸແຕ່ຂຶ້ນຢູ່ກັບຄວາມເຊື່ອ. ກະສັດຊາອູນໄດ້

ສັງເກດເຫັນວ່າດາວິດບໍ່ສົມຄວນຈະອອກໄປເພາະລາວຍັງນ້ອຍຢູ່. ໂກລິອາດເປັນນັກຮົບມາດົນນານກ່ອນດາວິດຈະເກີດມາ.

ດາວິດໄດ້ຍຶດເອົາປະສົບການຮອບຮອມເຂົ້າກັບການເຊື່ອຟັງໃນພຣະເຈົ້າເກີດເປັນຄວາມກ້າຫານ. ລາວໄດ້ກ່າວເຖິງໃນເມື່ອເວລາທີ່ລາວລ້ຽງແກະຂອງພໍ່ລາວ, ລາວໄດ້ຂ້າໂຕສິງແລະໂຕໝີທີ່ຈະເຂົ້າມາຄຸບກິນລູກແກະຂອງລາວ. ດາວິດຮູ້ວ່າລາວບໍ່ສົມຄວນທີ່ຈະສູ້ໜ້າຕໍ່ໜ້າກັບໂກລິອາດດ້ວຍກຳລັງຂອງລາວເອງ. ແຕ່ພຣະເຈົ້າໃຫ້ກຳລັງແລະຄວາມກ້າຫານແກ່ລາວ. ລາວຮູ້ແລ້ວວ່າພຣະເຈົ້າໄດ້ກະທຳມາກອນແລ້ວ ພຣະເຈົ້າຈະປະທານກຳລັງແລະຄວາມກ້າຫານເອົາຊະນະຊາຍປາເຖື່ອນຊາວຟີລິສຕິນ.

ກະສັດຊາອູນໄດ້ອວຍພອນໃຫ້ແກ່ດາວິດໃຫ້ໄປແລະຂໍໃຫ້ພຣະເຈົ້າສະຖິດຢູ່ກັບລາວ. ລາວໄດ້ເອົາ**ເຄື່ອງນຸ່ງໃນການສູ້ຮົບ**ຂອງລາວໃຫ້ດາວິດເພື່ອວ່າດາວິດຈະໃສ່ເປັນເຄື່ອງປ້ອງກັນຕົວເຂົ້າສນາມຮົບ. ລາວໄດ້ເອົາໝວກທອງສຳຣິດ, ເຄື່ອງປ້ອງກັນຕົວລາວ, ແລະດາບຂອງລາວ. ເຖິງຢ່າງໃດກໍຕາມບໍ່ວ່າຣິດອຳນາດຂອງພຣະເຈົ້າເປັນພະຍານຫຼັກຖານໄດ້ສຳແດງອອກມາທາງດາວິດກໍຕາມ, ຊາອູນກໍຍັງມີຄວາມເຊື່ອໝັ້ນໃນອາວຸດສົງຄາມຂອງຕົນ. ດາວິດສວມໃສ່ເຄື່ອງຮົບແລ້ວຕົວລາວເອງບໍ່ສາມາດທີ່ຍ່າງໄປມາໄດ້ສະດວກ.

ການໄວ້ວາງໃຈໃນມະນຸດແທນທີ່ຈະໄວ້ວາງໃຈໃນພຣະເຈົ້ານັ້ນເປັນການຕັດສິນໃຈທີ່ໂງ່ງາວທີ່ສຸດ. ມັນເປັນສິ່ງທີ່ກີດຂວາງເຮົາຢູ່ສເມີ. ດາວິດຄົ້ນພົບຄວາມກ້າຫານຂອງລາວໃນພື້ນຖານການກະທຳຂອງພຣະເຈົ້າໃນເວລາຜ່ານມາ, ໃນຂະນະທີ່ຊາອູນໄວ້ວາງໃຈໃນເຄື່ອງອາວຸດຂອງລາວ ທັງໆທີ່ລາວເອງບໍ່ມີຄວາມກ້າຫານທີ່ຈະໃຊ້ມັນ.

3. **<u>ກ້າຫານໃນການສະແດງອອກ</u>** 1 ຊາມູເອນ 17: 45-47

ດາວິດໄດ້ລາຊາອູນແລະປະເຄື່ອງຮົບໄວ້ແລ້ວລາວກໍມຸ້ງໜ້າໄປສູ່ສນາມຮົບ. ລາວໄດ້ຈັບເອົາໄມ້ຄ້ອນສຳລັບຖືໃນເວລາລ້ຽງແກະແລະຖົງກະຖຸນແລ້ວກໍເກັບເອົາກ້ອນຫີນສຳລັບກະຖຸນ, ລາວໄດ້ຕຽມພ້ອມທີ່ຈະຕໍ່ສູ້ກັບຍັກໃຫຍ່. ໃນຂະນະທີ່ດາວິດເຂົ້າໄປໃກ້ໂກລິອາດ ພວກຟີລິສຕິນໄດ້ຫົວເຍາະເຍີ້ຍລາວ, ແຕ່ດາວິດມີເຊື່ອໝັ້ນໃຈໃນອົງພຣະຜູ້ເປັນເຈົ້າ. ຍັກໃຫຍ່ເຂົ້າມາພ້ອມດ້ວຍ**ດາບ**, **ຫຼາວ**ແລະ**ກະບີ່**. ໂກລິອາດມີຄວາມໄວ້ໃຈຢ່າງດຽວກັນກັບຊາອູນຄືເຄື່ອງອາວຸດຂອງລາວແລະຄວາມສາມາດຂອງຕົວລາວເອງ. ເຖິງຢ່າງໃດກໍຕາມ, ດາວິດເວົ້າວ່າລາວມາໃນ**ນາມຂອງອົງພຣະຜູ້ເປັນເຈົ້າແຫ່ງຈັກກະວານ**.

ເມື່ອດາວິດຍືນຢູ່ຕໍ່ໜ້າໂກລິອາດ, ດາວິດພິສູດໃຫ້ເຫັນວ່າພຣະເຈົ້າຂອງລາວແມ່ນມີຈິງແລະລາວກໍຍອມທີ່ຈະເປີດໂອກາດໃຫ້ພຣະເຈົ້າທຳງານຜ່ານທາງຕົວລາວ. ລາວໄດ້ມີຄວາມຢ້ານກົວຄືກັນກະສັດແລະທະຫານຂອງລາວບໍ່. ດາວິດບໍ່ໄດ້ຮູ້ເລີຍວ່າເປັນກຳລັງນຳພາໂດຍອົງພຣະຜູ້ເປັນເຈົ້າ.

ເມື່ອເຮົາຍືນຢູ່ຕໍ່ໜ້າບັນຫາ, ເຮົາຄວນຍືນຂຶ້ນມຸ້ງໜ້າຕໍ່ສູ້ກັບຄວາມຢ້ານກົວຂອງເຮົາດ້ວຍຄວາມກ້າຫານຍອມຮັບວ່າພຣະເຈົ້າຊົງສະຖິດນຳພາຢູ່ໃນເຮົາ. ເຖິງຢ່າງໃດກໍຕາມ, ຖ້າເຮົາບໍ່ມີຄວາມກ້າຫານທີ່ຈະປະເຊີນໜ້າກັບບັນຫາເລັກໆນ້ອຍໆ. ເຮົາກໍຈະບໍ່ສາມາດເຫັນການຊົງນຳພາຂອງພຣະອົງໃຫ້ພວກເຮົາເຮັດໃນສິ່ງທີ່ໃຫຍ່ໆ.

ດາວິດຫົວເຍາະເຍີ້ຍໂກລິອາດໂດຍເວົ້າວ່າລາວສາມາດຈະທຸບຕີໃຫ້ລົ້ມລົງແລ້ວລາວຈະຕັດ**ຫົວ**ມັນອອກແລ້ວຈະມອບໃຫ້ທະຫານຟີລິສຕິນແລະກະສັດຂອງເຂົາ. ດາວິດເວົ້າເຊັ່ນນີ້ເພາະລາວຮູ້ວ່າ**ອິສຣາເອນມີພຣະເຈົ້າແທ້.** ການກະທຳຂອງທະຫານແລະກະສັດຊາອູນໄດ້ນຳເອົາຄວາມເສື່ອມເສັຽມາສູ່ຊື່ສຽງຂອງພຣະເຈົ້າ. ທະຫານຂອງຊາອູນບໍ່ມີ

ຄວາມກ້າຫານແລ້ວ, ເຂົາຍັງກະທຳຕົວເໝືອນກັບວ່າເຂົາບໍ່ມີພຣະເຈົ້າເລີຍ, ແຕ່ການກະທຳຂອງດາວິດສະແດງອອກໃຫ້ເຫັນເຖິງຣິດອຳນາດຂອງພຣະເຈົ້າ. ດາວິດຈິງປະສົບກັບຄວາມຕັ້ງໃຈຂອງລາວ.

ອີກບົດຮຽນນຶ່ງທີ່ດາວິດຕ້ອງການໃຫ້ທະຫານຮຽນຮູ້ກໍຄືບໍ່ແມ່ນ**ດາບ**ແລະ**ຫອກ**ແຕ່ແມ່ນພຣະເຈົ້າໄດ້**ຊ່ວຍເຫຼືອ**ເຮົາ. ການຕໍ່ສູ້ສົງຄາມນັ້ນຂຶ້ນຢູ່ກັບ**ພຣະເຈົ້າ**, ແລະແມ່ນພຣະອົງນັ້ນເຫຼະເປັນຜູ້ຊະນະສົງຄາມ. ໂກລິອາດໄດ້ຍ່າງມຸ້ງໜ້າໄປຫາດາວິດແລະດາວິດໄດ້ແລ່ນຍ່າງວ່ອງໄວເຂົ້າຕໍ່ສູ້ກັບຍັກໃຫຍ່ທີ່ເປັນສັດຕຣູຂອງອິສຣາເອນທີ່ບໍ່ມີໃຜຈະສູ້ໄດ້. ດາວິດໄດ້ຈົກເອົາກ້ອນຫີນອອກມາແລ້ວຍິງໃສ່ໂກລິອາດ ກ້ອນຫີນນັ້ນໄດ້ຖືກໜ້າຜາກຂອງລາວ, ເຮັດໃຫ້ກະໂຫລກຫົວມັນແຕກລົ້ມຂວ້ຳໜ້າລົງດິນຕາຍໃນທັນທີທັນໃດ. ເຮັດໃຫ້ພວກຟີຣິສຕິນພາກັນແຕກໜີໄປ. ເຮັດໃຫ້ຊາວອິສຣາເອນໄດ້ພົບກັບຜູ້ກ້າຫານຂອງເຂົາຜ່ານການທົດສອບຂອງດາວິດຈຶ່ງໄດ້ໃຊຊະນະ.

## <u>ບົດຮຽນແຫ່ງຊີວິດ:</u>

ເຖິງແມ່ນວ່າຈະເປັນຄຣິສຕຽນ, ຫຼາຍຄັ້ງພວກເຮົາກໍບໍ່ມີຄວາມກ້າຫານທີ່ຈະປະເຊີນກັບຄວາມຢ້ານກົວ. ບາງຄັ້ງຄົນທີ່ຢູ່ອ້ອມໆຂ້າງເຮົາກໍສະແດງອອກເຖິງຄວາມຢ້ານເນື່ອນກັນ, ແລະໃນຕົວຂອງເຮົາເອງກໍເຊື່ອວ່າເປັນຢ່າງນັ້ນແທ້ແທນທີ່ວ່າເຮົາຈະສແວງຫາພຣະເຈົ້າ. ເຖິງຢ່າງໃດກໍຕາມ, ໃນທີ່ຜ່ານມາຄຣິສຕຽນເຮົາສາມາດຄົ້ນພົບຄວາມກ້າຫານທີ່ຈະປະເຊີນໜ້າກັບຍັກໃຫຍ່ໂດຍອາສັຍຣິດອຳນາດຂອງພຣະເຈົ້າ.

ມີຫຼັກສຳຄັນອັນໃດແດ່ທີ່ເຮົາສາມາດຮຽນຮູ້ຈາກດາວິດແລະໂກລິອາດ?

- ❖ ເມື່ອພວກເຮົາປະຕິເສດທີ່ຈະປະເຊີນກັບການທ້າທາຍຍ້ອນຂາດຄວາມກ້າຫານ, ມັນຈະບໍ່ເກີດຄວາມຈະເຣີນຂຶ້ນຖ້າເຮົາຫັນໄປຟັງຄົນທີ່ບໍ່ມີຄວາມກ້າຫານທີ່ຢູ່ອ້ອມໆຂ້າງເຮົາ.
- ❖ ເຮົາຈະບໍ່ສາມາດປະເຊີນໜ້າກັບສົງຄາມຝ່າຍຈິດວິນຍາຖ້າເຮົາໃຊ້ອາວຸດສົງຄາມຂອງໂລກນີ້.
- ❖ ເມື່ອເຮົາປະເຊີນກັບເສິກສົງຄາມດ້ວຍຄວາມໝັ້ນໃຈໃນອົງຜູ້ເປັນເຈົ້າ, ເຮົາກໍສາມາດສະແດງໃຫ້ໂລກເຫັນເຖິງຣິດອຳນາດແລະພຣະສະງ່າຣາສີຂອງພຣະອົງ.
- ❖ ເມື່ອພຣະເຈົ້າສູ້ຮົບແທນພວກເຮົາ, ເຮົາຊະນະຜູ້ໃດກໍຕາມທີ່ຕໍ່ສູ້**ເຮົາ.**

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ WWW.lsbf.org ໂດຍ LLBC.